ບົດລາຍງານການເຄື່ອນໄຫວທຸລະກິດ ສຳລັບໄລຍະສາມເດືອນຂອງໄຕມາດ ທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

Report on BCEL's Business Performance for the Three-Month Period of Quarter III Ended 30 September 2021



BCEL Bank

1555

OneCare

www.bcel.com.la

I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ໃນແຜນຍຸດທະສາດໄລຍະຍາວ 2021 – 2025 ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: "ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ".

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ ແມ່ນການພັດທະນາການປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການບາເຊ ອ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານເພື່ອຮອງກັບການປ່ຽນແປງຂອງການພັດທະນາ ທຄຕລ ໃຫ້ມີຄວາມຊຳນິຊຳນານເປັນມືອາຊີບດ້ານການບໍລິການທະນາຄານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ ແລະ ສ້າງຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

❖ ແຜນງານ ແລະ ໂຄງການ 2021

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງໄດ້ແບ່ງອອກເປັນ 3 ຍຸດທະສາດໃຫຍ່, ປະກອບມີ 11 ແຜນງານ ແລະ 42 ໂຄງການ. ເຊິ່ງແຜນງານ ແລະ ໂຄງການທີ່ຈະຈັດຕັ້ງປະຕິບັດໃນປີ 2021 ມີ 11 ແຜນງານ, 42 ໂຄງການ ແລະ 268 ແຜນວຽກ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ** (ປະກອບມີ 5 ແຜນງານ 25 ໂຄງການ ແລະ 149 ແຜນວຽກ)
  - ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ ປະກອບມີ 5 ໂຄງການ ແລະ 62 ແຜນວຽກ;
  - ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ປະກອບມີ 7 ໂຄງການ ແລະ 33 ແຜນວຽກ;
  - ການພັດທະນາບໍລິຫານບຸກຄະລາກອນ ໃຫ້ເຂັ້ມແຂງ ແລະ ມີປະສິທິພາບ ປະກອບມີ 5 ໂຄງການ ແລະ 26 ແຜນວຽກ;
  - ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ ປະກອບມີ 6 ໂຄງການ ແລະ 26 ແຜນວຽກ;
  - ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualified ASEAN Bank (QAB) ປະກອບມີ 2 ໂຄງການ ແລະ 2 ແຜນວຽກ.
- **ຍຸດທະສາດທີ 2: ຍຸດທະສາດທັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ** (ປະກອບມີ 3 ແຜນງານ 12 ໂຄງການ ແລະ 107 ແຜນວຽກ)
  - ການພັດທະນາ ແລະ ການຄຸ້ມຄອງລະບົບໄອທີ ປະກອບມີ 5 ໂຄງການ ແລະ 25 ແຜນວຽກ;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ ປະກອບມີ 5 ໂຄງການ ແລະ 29 ແຜນວຽກ;

- ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking ປະກອບມີ 2 ໂຄງການ ແລະ 53 ແຜນວຽກ;

- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ** (ປະກອບມີ 3 ແຜນງານ 5 ໂຄງການ ແລະ 12 ແຜນວຽກ)
  - ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ ປະກອບມີ 3 ໂຄງການ ແລະ 6 ແຜນວຽກ;
  - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ ປະກອບມີ 2 ໂຄງການ ແລະ 3 ແຜນວຽກ;
  - ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard) ປະກອບມີ 3 ແຜນວຽກ;

II. ຖານະການເງິນ ແລະ ຜົນດຳເນີນງານ

1. ເສດຖະກິດມະຫາພາກ ສປປ ລາວ ແລະ ທ່າອ່ຽງໃນຕໍ່ໜ້າ

ອີງຕາມການລາຍງານຂອງ ທະນາຄານໂລກ ໃນເດືອນ ຕຸລາ 2021, ເສດຖະກິດຂອງ ສປປ ລາວ ໃນປີ 2021 ຄາດວ່າຈະຂະຫຍາຍໂຕພຽງແຕ່ 2,2% ເຊິ່ງຕ່ຳກວ່າລະດັບທີ່ຄາດການໃນເບື້ອງຕົ້ນ ໃນເດືອນ ເມສາ ທີ່ຢູ່ໃນລະດັບ 4%,ໂດຍການລະບາດຂອງພະຍາດໂຄວິດ-19 ຮອບ 02 ສົ່ງຜົນເຮັດໃຫ້ການຟື້ນໂຕທາງເສດຖະກິດສະລໍໂຕ ເຊິ່ງເຮັດໃຫ້ ສປປ ລາວ ກຳລັງປະເຊີນກັບຄວາມບໍ່ໝັ້ນຄົງທາງເສດຖະກິດມະຫາພາກ ດ້ວຍພາວະໜີ້ສິນທີ່ເພີ່ມຂຶ້ນ, ຄວາມສ່ຽງທາງດ້ານການເງິນ ແລະ ລາຍຮັບຈາກເງິນຕາຕ່າງປະເທດບໍ່ພຽງພໍ.

ພ້ອມດຽວກັນນີ້, ອີງຕາມບົດລາຍງານຂອງທະນາຄານ ADB ລະບັບເດືອນ ກັນຍາ 2021 ກໍ່ໄດ້ລະບຸວ່າ ເສດຖະກິດຂອງ ສປປ ລາວ ຄາດວ່າຈະຂະຫຍາຍໂຕ 2,3% ໃນປີ 2021 ຫຼຸດລົງເມື່ອທຽບໃສ່ 4,0% ທີ່ໄດ້ຄາດຄະເນໄວ້ໃນເດືອນເມສາ ເຊິ່ງການຟື້ນໂຕທາງດ້ານເສດຖະກິດຂອງ ສປປ ລາວ ຈະໄດ້ຮັບການສະໜັບສະໜູນຈາກການອອກໃບອະນຸຍາດຂຸດຄົ້ນບໍ່ແຮ່ໃໝ່, ລາຍຮັບຈາກການສົ່ງອອກກະແສໄຟຟ້າ ລວມເຖິງການເປີດນຳໃຊ້ທາງລົດໄຟເຊື່ອມຈອດ ລະຫວ່າງ ສປປ ລາວ ແລະ ສປ ຈີນ ຕາມແຜນທີ່ໄດ້ວາງໄວ້. ໃນຂະນະທີ່ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄຄຊ) ຄາດວ່າການເຕີບໂຕທາງເສດຖະກິດ ສປປ ລາວ ຈະຂະຫຍາຍໂຕລະຫວ່າງ 2,7% - 3,7% ແລະ ອົງການ IMF ຄາດຄະເນໄວ້ພຽງແຕ່ 2,1%.

1.1 ຜົນກະທົບຂອງການລະບາດພະຍາດ Covid-19 ຕໍ່ພາກສ່ວນທຸລະກິດ

ອີງຕາມການສຳຫຼວດຂອງທະນາຄານໂລກ ກ່ຽວກັບຜົນກະທົບ Covid-19 ຕໍ່ພາກທຸລະກິດ ແລະ ຄົວເຮືອນ 2021 ພົບວ່າການຈ້າງງານໄດ້ຫຼຸດລົງຫຼາຍ ແລະ ທຸລະກິດຄົວເຮືອນຫຼາຍກ່ວາ 30% ຕ້ອງປິດກິດຈະການລົງນັບແຕ່ເກີດການລະບາດຂອງພະຍາດ. ໃນນີ້, ຍອດຂາຍຕໍ່ເດືອນຂອງທຸລະກິດ ຫຼຸດລົງເຖິງ 48% ໃນຊ່ວງໄລຍະເດືອນມີນາ ເຖິງ ເດືອນເມສາ 2021 ແລະ ເກືອບ 50% ຂອງຈຳນວນວິສາຫະກິດທີ່ຖືກສຳຫຼວດໄດ້ປະສົບບັນຫາການຂາດແຄນກະແສເງິນສົດ ແລະ ຫຼາຍກ່ວາ 25% ຂອງຈຳນວນວິສາຫະກິດທັງໝົດ ແມ່ນຄາດວ່າຈະຕົກໃນສະພາວະຕິດໜີ້ໃນໄລຍະ 06 ເດືອນໃນຕໍ່ໜ້າ.

ໃນຂະນະດຽວກັນ, ຜົນການສຳຫຼວດຂອງ ສະພາການຄ້າ ແລະ ອຸດສາຫະກຳເອີຣົບປະຈຳລາວ ໃນເດືອນພຶດສະພາ 2021 ພົບວ່າ: 52% ຂອງຜູ້ທີ່ຖືກສອບຖາມ ລະບຸວ່າ ທຸລະກິດຂອງຕົນໄດ້ຮັບຜົນກະທົບຢ່າງໜັກ, 30% ຄາດວ່າ ທຸລະກິດຂອງຕົນຈະຕ້ອງໃຊ້ເວລາຟື້ນຟູ ປະມານ 1 - 2 ປີ, 27% ລະບຸວ່າ ທຸລະກິດຂອງຕົນມີຍອດຂາຍຫຼຸດລົງ ຫຼາຍກວ່າ 50%.

1.2 ອັດຕາເງິນເຟີ້.

ສະພາບລວມອັດຕາເງິນເຟີ້ເດືອນສິງຫາ 2021 ທຽບກັບເດືອນດຽວກັນຂອງປີຜ່ານມາ (ປີຕໍ່ປີ) ເພີ່ມຂຶ້ນ 3,81% ເຊິ່ງມາຈາກການເໜັງຕີງເພີ່ມຂຶ້ນຂອງທຸກໝວດສິນຄ້າ. ນອກຈາກນີ້, ອັດຕາເງິນເຟີ້ເພີ່ມຂຶ້ນມີສາເຫດຕົ້ນຕໍ ມາຈາກການອ່ອນຄ່າຂອງເງິນກີບທຽບກັບເງິນຕາຕ່າງປະເທດ, ການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການ ສະໜອງສິນຄ້າພົບຄວາມຫຍຸ້ງຍາກ ສົ່ງຜົນກະທົບໃຫ້ລາຄາຂອງສິນຄ້າສືບຕໍ່ເພີ່ມຂຶ້ນ, ແນວໂນ້ມລາຄານ້ຳມັນທີ່ ເພີ່ມສູງຂຶ້ນ ເຮັດໃຫ້ຕົ້ນທຶນການຂົນສົ່ງສິນຄ້າ ແລະ ການຜະລິດເພີ່ມຂຶ້ນ ແລະ ປັດໄຈດ້ານລະດູການ ກໍເປັນໂຕຂັບ ເຄື່ອນຕໍ່ອັດຕາເງິນເຟີ້ (ສູນສະຖິຕິແຫ່ງຊາດ, 2021).

1.3 ອັດຕາແລກປ່ຽນ.

❖ **ອັດຕາແລກປ່ຽນ ກີບ/ໂດລາ.**

ຮອດເດືອນ ກັນຍາ 2021 ອັດຕາແລກປ່ຽນໃນລະບົບທະນາຄານ ສະເລ່ຍ 9.715 ກີບ/ໂດລາ ເພີ່ມຂຶ້ນ 6,3% ເມື່ອທຽບໃສ່ປີຜ່ານມາ, ໃນຂະນະທີ່ອັດຕາແລກປ່ຽນນອກລະບົບ ເຫັນວ່າ ມີການເໜັງຕີງສູງ ສະເລ່ຍ 11.672 ກີບ/ໂດລາ ເພີ່ມຂຶ້ນເຖິງ 17,7%, ສົ່ງຜົນໃຫ້ອັດຕາແລກປ່ຽນລະຫວ່າງຕະຫຼາດນອກລະບົບ ແລະ ທະນາ ຄານມີສ່ວນຕ່າງສູງເຖິງ 20% ເຊິ່ງສາເຫດເນື່ອງຈາກການຫຼຸດລົງຂອງກະແສການໄຫຼເຂົ້າຂອງເງິນຕາຕ່າງປະເທດ ແລະ ຂາດລາຍຮັບທີ່ເປັນເງິນຕາຕ່າງປະເທດ ໂດຍສະເພາະຈາກການທ່ອງທ່ຽວ, ການຄ້າ ແລະ ການລົງທຶນ ສົ່ງຜົນ ໃຫ້ການສະໜອງສະກຸນເງິນໂດລາຂອງທະນາຄານທຸລະກິດບໍ່ພຽງພໍກັບສະພາບຄວາມຕ້ອງການ.

❖ **ອັດຕາແລກປ່ຽນ ກີບ/ບາດ.**

ໃນລະບົບທະນາຄານ ສະເລ່ຍ 347,83 ກີບ/ບາດ ເພີ່ມຂຶ້ນ ປະມານ 9% ທຽບໃສ່ປີຜ່ານມາ, ໃນຂະນະທີ່ ອັດຕາແລກປ່ຽນນອກລະບົບ ສະເລ່ຍຢູ່ໃນລະດັບ 354,54 ກີບ/ບາດ ເພີ່ມຂຶ້ນ ປະມານ 11%. ເຖິງຢ່າງໃດກໍຕາມ, ເຫັນວ່າສ່ວນຕ່າງລະຫວ່າງອັດຕາແລກປ່ຽນຕະຫຼາດກັບທະນາຄານບໍ່ສູງ (2%). ອັດຕາແລກປ່ຽນ ກີບ/ບາດ ມີການ ເໜັງຕີງສູງເຊິ່ງສາເຫດຕົ້ນຕໍແມ່ນຄວາມຕ້ອງການເງິນບາດໃນລາວມີສູງ ເນື່ອງຈາກນຳເຂົ້າສິນຄ້າກວມປະມານ 50% ຂອງການນຳເຂົ້າທັງໝົດ (ສູນສະຖິຕິແຫ່ງຊາດ, 2020) ແລະ ມູນຄ່າການນຳເຂົ້າສິນຄ້າຈາກໄທ ສະເພາະໃນ ເດືອນກັນຍາ ປີ 2021 ມີມູນຄ່າກວມ 112 ລ້ານໂດລາ ໃນຂະນະທີ່ການສົ່ງອອກມີພຽງ 45 ລ້ານໂດລາ (Lao Trade Portal, 2021).

1.4 ສະພາບການນຳເຂົ້າ-ສົ່ງອອກ ແລະ ການລົງທຶນ.

ມູນຄ່າການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ ໃນເດືອນ ກັນຍາ ປີ 2021 ບັນລຸໄດ້ປະມານ 777 ລ້ານໂດລາ (ຍັງບໍ່ກວມເອົາມູນຄ່າການສົ່ງອອກໄຟຟ້າ). ໃນນັ້ນ, ມູນຄ່າການສົ່ງອອກ ມີປະມານ 447 ລ້ານໂດລາ ແລະ ມູນຄ່າການນຳເຂົ້າ ມີປະມານ 330 ລ້ານໂດລາ ເຊິ່ງເກີນດຸນການຄ້າປະມານ 117 ລ້ານໂດລາສະຫາລັດ (Lao Trade Portal, 2021). ສິນຄ້າສົ່ງອອກຫຼັກປະກອບມີ: ແຮ່ທອງ, ທອງແດງ, ໝາກກ້ວຍ, ຄຳແທ່ງ, ເຄື່ອງນຸ່ງ ຫົ່ມ, ນ້ຳຕານ ແລະ ອື່ນໆ (ສົ່ງອອກຫຼັກໄປປະເທດ ຈີນ, ຫວຽດນາມ, ໄທ, ອິນເດຍ ແລະ ສະຫະລັດ ອາເມລິກາ). ສ່ວນໝວດສິນຄ້ານຳເຂົ້າຫຼັກປະກອບມີ: ພາຫະນະ, ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ, ນ້ຳມັນກາຊວນ, ອຸປະກອນກົນຈັກ ແລະ ອື່ນໆ (ນຳເຂົ້າຫຼັກຈາກປະເທດ ໄທ, ຈີນ, ຫວຽດນາມ, ຍີ່ປຸ່ນ ແລະ ສະວິດເຊີແລນ).

ສະພາບການລົງທຶນ ແລະ ການໃຊ້ຈ່າຍ-ຊົມໃຊ້ພາຍໃນ ໄຕມາດ 1 ປີ 2021 ເຫັນວ່າມີການຟື້ນ ໂຕ ເຊິ່ງມູນຄ່າການຈໍລະຈອນສິນຄ້າພາຍໃນເພີ່ມຂຶ້ນ 31% ທຽບປີຕໍ່ປີ, ສ່ວນ ໄຕມາດ 2-3 ອາດມີການສະລໍໂຕ ແຕ່ໂດຍລວມຄາດວ່າ ໝົດປີ 2021 ຈະດີກວ່າປີ 2020. ນອກຈາກນີ້, ຫຼາຍໂຄງການລົງທຶນໃຫຍ່ລະດັບຊາດ ຍັງ ສືບຕໍ່ດຳເນີນການກໍ່ສ້າງປົກກະຕິ ແລະ ຄາດວ່າສຳເລັດໃນປີ 2022 ເຊັ່ນ: ການກໍ່ສ້າງທາງລົດໄຟລາວ-ຈີນ, ໂຄງການ ພັດທະນາທ່າບົກ-ທ່ານາແລ້ງ ແລະ ເຂດໂລຈິສຕິກທີ່ມີມູນຄ່າການກໍ່ສ້າງທັງໝົດ 727 ລ້ານໂດລາ (ສຄສຊ, 2021).

2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ.

ໃນໄລຍະໄຕມາດ 03/2021 ທຄຕລ ໄດ້ດຳເນີນປັບປຸງກົງຈັກການຈັດຕັ້ງພາຍໃນ ທຄຕລ ເພື່ອໃຫ້ສອດຄ່ອງຕາມພາລະບົດບາດຂອງແຕ່ລະພາກສ່ວນ, ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ໄຕມາດ 2/2021 (ຈັດອອນລາຍ 1 ຄັ້ງ) ແລະ ຈັດກອງປະຊຸມສະພາບໍລິຫານ ສະໄໝສາມັນ ທຄຕລ ຄັ້ງທີ 3, ສຳເລັດການດັດແກ້ແຜນການປະຈຳປີ 2021, ສຳເລັດການຮັບຮອງບົດກວດສອບຖານະການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021 ທຄຕລ ຈາກບໍລິສັດກວດສອບພາຍນອກ, ອັບເດດເຄື່ອງ EDC ແຕ່ລະຈຸດໃຫ້ສາມາດຮອງຮັບ QR ພາຍໃນ-QR ສາກົນ ແລະ ຮອງຮັບ CONTACTLESS ແລະ ປະຕິບັດມາດຕະການປ້ອງກັນພະຍາດໂຄວິດ-19 ໃນແຕ່ລະໄລຍະຕາມແຈ້ງການຂອງຄະນະສະເພາະກິດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປ້ອງກັນການແຜ່ລະບາດ.

3. ຂໍ້ມູນການທາງດ້ານການເງິນທີ່ສຳຄັນຂອງ ທຄຕລ.

ມາຮອດໄຕມາດ 03 ປີ 2021 ເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ຍັງຄົງສືບຕໍ່ພົບກັບຄວາມຫຍຸ້ງຍາກ ແລະ ທ້າທາຍຫຼາຍດ້ານ ພາຍໃຕ້ສະພາບການລະບາດຂອງພະຍາດ COVID-19 ທີ່ຍັງຄົງລະບາດເປັນວົງກ້ວາງ, ແຕ່ເຖິງຢ່າງໃດຕໍ່ຕາມ ທຄຕລ ໄດ້ອອກແຮງສູ້ຊົນໃນການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດເຊິ່ງມີຕົວເລກການປະຕິບັດ 09 ເດືອນ 2021 ທຽບໃສ່ແຜນການປີ 2021 ທີ່ໄດ້ດັດແກ້ໃໝ່ດັ່ງລຸ່ມນີ້:

- **ຍອດຊັບສິນ/ໜີ້ສິນ:** 63.095.260 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 101,28% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,37%;
- **ຍອດເງິນກູ້ທັງໝົດ:** 29.694.403 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 120,58% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ -0,72%;
- **ຍອດເງິນຝາກ:** 57.087.142 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 101,94%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 22,58%;
- **ທຶນທັງໝົດ:** 2.142.720 ລ້ານກີບ ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 93,62%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ -0,40%;
- **ກຳໄລກ່ອນອາກອນ:** ສຳລັບໄລຍະສາມເດືອນ ຂອງໄຕມາດທີ 03 ປີ 2021 ທຄຕລ ຂາດທຶນ -7.137 ລ້ານກີບ, ກຳໄລກ່ອນອາກອນສຳລັບໄລຍະ 09 ເດືອນປີ 2021 ປະຕິບັດໄດ້ 72.440 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 278,62%;
- **ກຳໄລຫຼັງອາກອນ:** ສຳລັບໄລຍະສາມເດືອນ ຂອງໄຕມາດທີ 03 ປີ 2021 ທຄຕລ ປະຕິບັດໄດ້ 8.716 ລ້ານກີບ, ກຳໄລຫຼັງອາກອນສຳລັບໄລຍະ 09 ເດືອນປີ 2021 ປະຕິບັດໄດ້ 46.016 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 221,23%.

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ກັນຍາ 2021 ທະນາຄານມີ (1) ສຳນັກງານໃຫຍ່, (6) ບໍລິສັດຮ່ວມທຶນ, (20) ສາຂາຫລັກ, (98) ໜ່ວຍບໍລິການ ແລະ (15) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ

- ເບີໂທ (+856-21) 213200 ຫຼື ໂທ 1555
- ແຟັກ (+856-21) 213202
- ອີເມວ: bcelhqv@bcel.com.la
- ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ເຊັນອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60% ຮຸ້ນ, ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍອັດຕາມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບ ເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ກັນຍາ 2021 ແມ່ນ 1.038.617 ລ້ານກີບ (31 ທັນວາ 2020: 1.038.617 ລ້ານກີບ).

IV. ໂຄງຮ່າງການຈັດຕັ້ງ ສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ 7 ທ່ານ:

- ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ ເປັນປະທານ
- ທ່ານ ຄຳສຸກ ສູນດາລາ ເປັນຮອງປະທານ
- ທ່ານ Stephane Mangiavacca ເປັນສະມາຊິກ
- ທ່ານ ພຸດທະຂັນ ຂັນຕີ ເປັນສະມາຊິກ
- ທ່ານ ຮອງສາດສະດາຈານ ປອ ພູເພັດ ກ້ຽວພິລະວົງ ເປັນສະມາຊິກ
- ທ່ານ ວຽງສຸກ ຈຸນທະວົງ ເປັນສະມາຊິກ

❖ **ໝາຍເຫດ:**

- ➢ ສຳລັບທ່ານ ພູຂົງ ຈັນທະຈັກ ເປັນສະມາຊິກສະພາບໍລິຫານ (ຜູ້ອຳນວຍການ ທຄຕລ ຄົນເກົ່າ ໄດ້ຖືກຊັບຊ້ອນໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ ຕາມຂໍ້ຕົກລົງເລກທີ 048/ທຄຕລ ລົງ ວັນທີ 10 ມິຖຸນາ 2021)
- ➢ ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການໃໝ່ ຕາມຂໍ້ຕົກລົງເລກທີ 015/ທຄຕລ ລົງວັນທີ 10 ມິຖຸນາ 2021 ແມ່ນໄດ້ສະເໜີຊື່ເຂົ້າໃນສະມາຊິກສະພາບໍລິຫານ ທຄຕລ ແລ້ວ ລໍຖ້າການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ (ສະໄໝວິສາມັນ)

1.2. ປະຫວັດຫຍໍ້ຂອງສະພາບໍລິຫານ

❖ **ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ: ເປັນປະທານ**



- ວັນເດືອນປີເກີດ: 24/11/1966
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງປະຈຸບັນ: ຮອງລັດຖະມົນຕີ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາເອກ, ປະລິນຍາໂທດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອົດສະຕາລີ ປະເທດອົດສະຕາລີ, ປະລິນຍາໂທດ້ານບໍລິຫານທຸລະກິດທີ່ມະຫາວິທະຍາໄລທຳມະສາດ, ປະເທດໄທ, ປະລິນຍາຕີ, ປະລິນຍາໂທດ້ານຟີຊິກ ແລະ ເລຂາຄະນິດທີ່ມະຫາວິທະຍາໄລມິດສະກູ ປະເທດລັດເຊຍ.

❖ **ທ່ານ ຄຳສຸກ ສູນດາລາ: ຮອງປະທານສະພາບໍລິຫານ**



- ວັນເດືອນປີເກີດ: 03/06/1945
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ, ຝຣັ່ງ
- ຕຳແໜ່ງ: ກຳມະການອິດສະຫຼະ
- ປະຫວັດການສຶກສາ: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ, ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ ປະເທດອິນເດຍ ແລະ ລະດັບປະລິນຍາຕີ ຈາກປະເທດ ອົດສະຕາລີ, ມະຫາວິທະຍາໄລນິວຊາວເວ.

❖ **ທ່ານ ຣສຈ ປອ ພູເພັດ ກ້ຽວພິລາວົງ: ກຳມະການອິດສະຫຼະ**



- ວັນເດືອນປີເກີດ: 05/02/1974
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ, ຍີ່ປຸ່ນ
- ຕຳແໜ່ງ: ຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ
- ລະດັບການສຶກສາ: ປະລິນຍາເອກເສດຖະສາດ ມະຫາວິທະຍາໄລໂຄເບ, ປະເທດຍີ່ປຸ່ນ; ປະລິນຍາໂທ ແລະ ປະລິນຍາຕີ ວິສະວະກຳໂຍທາ ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ.

❖ **ທ່ານ ພຸດທະຂັນ ຂັນຕີ : ກຳມະການ**



- ວັນເດືອນປີເກີດ: 02/05/1970
- ສັນຊາດ: ລາວ
- ພາສາ: ລາວ, ຫວຽດນາມ ແລະ ລັດເຊຍ
- ຕຳແໜ່ງ: ຮອງຫົວໜ້າຄັງເງິນແຫ່ງຊາດ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາໂທ ທີ່ສະຖາບັນການເງິນຮ່າໂນ້ຍ, ສສ ຫວຽດນາມ ແລະ ມະຫາວິທະຍາໄລ ດາແກັດສະຕານ ອາດີດສະຫະພາບໂຊຫວຽດ.

❖ **ທ່ານ Stephane MANGIAVACCA: ກຳມະການ**



- ວັນເດືອນ ປີເກີດ: 11/07/1975
- ສັນຊາດ: ຝຣັ່ງ
- ພາສາ: ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ
- ຕຳແໜ່ງ: ຫົວໜ້າຝ່າຍທຸລະກິດຕ່າງປະເທດ, ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ລະດັບການສຶກສາ: ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne, ຈົບປະລິນຍາຕີເສດຖະສາດ, ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ ແລະ ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick ປະເທດ Canada.

❖ **ທ່ານ ວຽງສຸກ ຈຸນທະວົງ: ກຳມະການ**



- ວັນເດືອນປີເກີດ: 15/08/1964
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ ແລະ ເຊັກໂກ
- ຕຳແໜ່ງ: ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ບໍລຸງທິດສະດີການເມືອງ 45 ວັນຈາກໂຮງຮຽນ ການເມືອງ - ການປົກຄອງ ແລະ ປະລິນຍາໂທ ສາຂາເສດຖະກິດການຄ້າຈາກສາທາລະນະລັດເຊັກ.

2. ໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ

❖ **ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: ປະກອບມີ 7 ທ່ານ**

- ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ
- ທ່ານ ນາລິນ ສີລະວົງສິດ ຮອງຜູ້ອຳນວຍການ
- ທ່ານ ກົງສັກ ສຸພອນສີ ຮອງຜູ້ອຳນວຍການ
- ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
- ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ
- ທ່ານ ນ. ບົວໄພວັນ ນັນດາວົງ ຮອງຜູ້ອຳນວຍການ
- ທ່ານ ສາຍຈິດ ສິມມະວົງ ຮອງຜູ້ອຳນວຍການ





3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ໃນໄຕມາດ 03 ປີ 2021 ສະພາບໍລິຫານ ທຄຕລ ໄດ້ດຳເນີນກອງປະຊຸມຂອງຕົນເອງ ທັງໝົດ 3 ຄັ້ງ ສາມາດສັງລວມການ ເຄື່ອນໄຫວທີ່ສຳຄັນໄດ້ດັ່ງນີ້:

- ຮັບຮອງການຈັດກຸ່ມລູກຄ້າຄວາມສ່ຽງຂອງລູກຄ້າສິນເຊື່ອ ທຄຕລ ແລະ ວິທີການແກ້ໄຂສຳລັບລູກຄ້າແຕ່ລະກຸ່ມ.
- ຮັບຮອງການອະນຸມັດເງິນກູ້ທີ່ຢູ່ຂອບເຂດສິດຂອງສະພາບໍລິຫານ ທຄຕລ.
- ຮັບຮອງເອກະສານລາຍງານການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021 ທີ່ໄດ້ຮັບການທົບທວນຈາກຜູ້ກວດສອບພາຍນອກ.
- ຮັບຮອງການດັດແກ້ແຜນທຸລະກິດປະຈຳປີ 2021 ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານ ທຄຕລ ຊຸດໃໝ່ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນຮັບຮອງ.
- ຮັບຮອງວາລະການຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ທີ່ຈະໄດ້ຂຶ້ນໃນວັນທີ 29 ຕຸລາ 2021 ທີ່ໂຮງແຮມ ເມືອງແຫ່ງ.

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ. ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ, ຕິດຕາມບັນດາໂຄງການບາເຊ ll ຊຶ່ງສຳເລັດແລ້ວ 4 ໂຄງການ ແລະ ໂຄງການກຳລັງດຳເນີນການຢູ່ອີກ 8 ໂຄງການ.

3.3 ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາຮັບຮອງເອົາລະບຽບນະໂຍບາຍ ຂອງ ທຄຕລ ແນໃສ່ຜົນປະໂຫຍດຂອງ ທຄຕລ ແລະ ຜູ້ຖືຮຸ້ນ ຊຶ່ງຄະນະກຳມະການໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຕາມສະພາບໍລິຫານ ທຄຕລ ຕາມຂັ້ນຕອນ ເປັນຕົ້ນແມ່ນ ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງການປັບປຸງລະບຽບວ່າດ້ວຍການປະຕິບັດວິໄນຕໍ່ພະນັກງານ ທຄຕລ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເປີດກອງປະຊຸມເພື່ອຄົ້ນຄວ້າພິຈາລະນາຮັບຮອງຜົນການດຳເນີນງານຂອງ ທຄຕລ ແລະ ບັນຫາຕ່າງໆ ທີ່ຈະສະເໜີຜ່ານສະພາບໍລິຫານ ຈຳນວນ 01 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຄະນະກຳມະການໄດ້ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຕໍ່ຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳ ຢ່າງໃກ້ຊິດ ໂດຍສະເພາະແມ່ນວຽກງານການຂະຫຍາຍສິນເຊື່ອ, ການເກັບກູ້ໜີ້ NPL ແລະ ວຽກງານການບໍລິຫານທຶນແຕ່ລະໄລຍະ.
- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນດຳເນີນງານປະຈຳປີ, ແຜນຍຸດທະສາດໄລຍະຍາວ ແລະ ການປະຕິບັດແຜນງານ, ໂຄງການ ຕ່າງໆ;
- ຕິດຕາມຄວາມຄືບໜ້າໃນການຮັບຮອງທ່ານຜູ້ອຳນວຍໃໝ່ ເຂົ້າເປັນສະມາຊິກສະພາບໍລິຫານ ເພື່ອສະເໜີຂັ້ນເທິງພິຈາລະນາຕາມຂັ້ນຕອນ.
- ຕິດຕາມວຽກງານການບໍລິຫານ ແລະ ການພັດທະນາບຸກຄະລາກອນ ຂອງ ທຄຕລ.

3.5 ຄະນະກຳມະການຄັດເລືອກ

ຄະນະກຳມະການ ໄດ້ຄົ້ນຄວ້າພິຈາລະນາບຸກຄະລາກອນຂັ້ນຄະນະບໍລິຫານງານ ເພື່ອສະເໜີຂໍແຕ່ງຕັ້ງຕຳແໜ່ງງານໃໝ່ ແລະ ຊັບຊ້ອນໝູນວຽນບັນດາຕຳແໜ່ງງານ ຂອງ ທຄຕລ ໃຫ້ມີຄວາມເໝາະສົມສອດຄ່ອງກັບສະພາບໃນແຕ່ລະໄລຍະ ຢູ່ ພະແນກ, ສູນ ສຳນັກງານໃຫຍ່ ແລະ ສາຂາ ທຄຕລ ທົ່ວລະບົບ.

3.6 ຄະນະກຳມະການກວດສອບ

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ, ຂັ້ນຕອນ, ຕ້ອງເອົາໃຈໃສ່ໃນວຽກງານການກວດກາສຸກເສີນ, ເຝົ້າລະວັງບັນຫາຂໍ້ພົບເຫັນຕ່າງໆ ແລະ ການຕຳນິສິ່ງຂ່າວຈາກລູກຄ້າ, ເພື່ອໃຫ້ຮັບປະກັນແກ້ໄຂບັນຫາໃຫ້ທັນການ. ຕິດຕາມການປະຕິບັດສິດການປ່ອຍສິນເຊື່ອຂອງສາຂາ ນຳໃຊ້ມາດຕະການແກ້ໄຂບັນຫາຕ່າງໆໃຫ້ເໝາະສົມ;
- ດຳເນີນການກວດກາປົກກະຕິ 42 ພາກສ່ວນ, ກວດກາສະເພາະກິດ 02 ຄັ້ງ, ກວດກາສະເພາະດ້ານ 1 ຄັ້ງ ແລະ ກວດກາສຸກເສີນຂອງບັນດາພະແນກ, ສູນ ຈຳນວນ 05 ຄັ້ງ ແລະ ສາຂາ ທຄຕລ 65 ຄັ້ງ. ພ້ອມທັງຕິດຕາມການແກ້ໄຂຂໍ້ພົບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາພະແນກ, ສາຂາ ທຄຕລ ທົ່ວລະບົບ;
- ຕິດຕາມວຽກງານການແກ້ໄຂຂໍ້ພົບເຫັນຂອງກວດສອບພາຍໃນ ແລະ ກວດສອບພາຍນອກ ຢ່າງເປັນປົກກະຕິ;
- ສຳເລັດການຮັບຮອງບົດລາຍງານເອກະສານການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021.
- ປະສານງານກັບຄະນະກວດກາຈາກກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ໃນການກວດກາ ທຄຕລ ປະຈຳປີ 2020 ຮອດເດືອນ 08/2021 ແລະ ຄະນະກວດສອບແຫ່ງລັດໃນການອອກບົດບັນທຶກຜົນການກວດສອບ ທຄຕລ ປະຈຳປີ 2020.
- ສຳເລັດການຊື້ແບບຟອມແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ ທຄຕລ ຈຳນວນ 350 ຊຸດ.

V. ຄວາມຮັບຜິດຊອບໃນສັງຄົມ:

➢ ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ ໃນໄລຍະໄຕມາດ 03 ປີ 2021, ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ທີ່ໄດ້ເປີດຮັບບໍລິຈາກ ທັງໝົດ 11 ໂຄງການເປັນຕົ້ນແມ່ນ ໂຄງການລະດົມເພື່ອປ້ອງກັນຄວບຄຸມແກ້ໄຂການລະບາດຈຂອງພະຍາດໂຄວິດ 19, ລະດົມທຶນຊື້ອຸປະກອນການແພດເພື່ອຊ່ວຍເຫຼືອເດັກນ້ອຍຂອງໂຮງໝໍເພື່ອນລາວ, ລະດົມທຶນຊ່ວຍເຫຼືອບັນເທົາທຸກໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມແຂວງໄຊຍະບູລີ, ຊ່ວຍປຸກສ້າງທີ່ພັກອາໄສຄອບຄົວທີ່ຖືກອັກຄີໄພເມືອງນາໜາຍແຂວງຄຳມ່ວນ ແລະ ໂຄງການອື່ນໆ. ພ້ອມກັນນັ້ນ, ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ

ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ, ຊຸກຍູ້ຊ່ວຍເຫຼືອຄະນະສະເພາະກິດປ້ອງກັນພະຍາດໂຄວິດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ລວມທັງໝົດໂຄງການ One Heart ແລະ ປະກອບສ່ວນຊຸກຍູ້ສັງຄົມ ເປັນຈຳນວນເງິນ 498 ລ້ານກວ່າກີບ.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ (ກ່ອນການກວດສອບ)

ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

ສາລະບານ **ໜ້າ**

ໃບລາຍງານຜົນການດຳເນີນງານ **1**

ໃບລາຍງານຜົນການດຳເນີນງານສັງລວມ **2**

ໃບລາຍງານຖານະການເງິນ **3**

ໃບລາຍງານສ່ວນປ່ຽນແປງທຶນ **4**

ໃບລາຍງານກະແສເງິນສົດ **5-6**

ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ **7-20**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບິດ ອະທິບາຍ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ III ທີ່ສິ້ນສຸດວັນ ທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ III ທີ່ສິ້ນສຸດວັນ ທີ 30 ກັນຍາ 2020 ລ້ານກີບ
ລາຍຮັບດອກເບ້ຍ		616.154	572.193
ລາຍຈ່າຍດອກເບ້ຍ		(372.524)	(329.188)
ລາຍຮັບສຸດທິຈາກດອກເບ້ຍ	5	**243.630**	**243.005**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ		77.341	67.566
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ		(9.297)	(5.801)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	6	**68.044**	**61.765**
ກຳໄລ(ຂາດທຶນ)ສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ		23.520	38.614
ຂາດທຶນສຸດທິ ຈາກການຊື້-ຂາຍເອກະສານອານຸພັນ		(893)	-
ລາຍຮັບອື່ນໆຈາກການດຳເນີນງານ		25.477	9.797
ລາຍຮັບສຸດທິຈາກການດຳເນີນງານ		**359.778**	**353.181**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ		(264.301)	(55.381)
ການສູນເສຍຄ່າເສື່ອມມູນຄ່າຂອງການລົງທຶນການເງິນ		6.520	1.150
ລາຍຮັບສຸດທິຈາກການດຳເນີນງານ		**101.997**	**298.950**
ລາຍຈ່າຍບຸກຄະລາກອນ		(51.179)	(100.631)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		(22.317)	(18.042)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ		(1.928)	(1.676)
ລາຍຈ່າຍອື່ນໆໃນການດຳເນີນງານ	7	(43.883)	(34.616)
ລວມລາຍຈ່າຍໃນການດຳເນີນງານ		**(119.307)**	**(154.965)**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຮ່ວມ ແລະ ວິສາຫະກິດປະສົມ		10.173	10.697
ກຳໄລກ່ອນອາກອນ		**(7.137)**	**154.682**
ລາຍຈ່າຍອາກອນກຳໄລ	19	14.748	(18.513)
ອາກອນເຍື່ອນຊຳລະ	19	1.105	-
ກຳໄລສຸດທິພາຍໃນໄລຍະ		**8.716**	**136.169**
ກຳໄລຕໍ່ຮຸ້ນ (ກີບ)	8	42	656

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ເພັດສະໝອນ ສົມຊະນະ
ຮອງຫົວໜ้าพะแนกกวดกาพายใน

ອະນຸມັດໂດຍ:

ທ່ານ ນາລິນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 09 ພະຈິກ 2021

ບິດອະທິບາຍຂ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນເຫຼົ່ານີ້.

ໃບລາຍງານຜົນການດຳເນີນງານສັງລວມ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ກຳໄລສຸດທິພາຍໃນໄລຍະ	**8.716**	**136.169**
ລາຍຮັບໆ		
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	2.630	(55)
ລາຍຈ່າຍ(ລາຍຮັບ) ພາຍໃນໄລຍະ, ສຸດທິຈາກອາກອນ	**2.630**	**(55)**
ລວມລາຍຮັບອື່ນ ພາຍໃນໄລຍະ, ສຸດທິຈາກອາກອນ	**11.346**	**136.144**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ເພັດສະໝອນ ສົມຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ບາລີນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 09 ພະຈິກ 2021

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນ (ກ່ອນການກວດສອບ)
ໃນວັນທີ 30 ກັນຍາ 2021

	ບິດ ອະທິບາຍ	30 ກັນຍາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ		16.430.972	12.836.829
ເງິນຝາກຢູ່ທະນາຄານອື່ນ	9	7.553.167	4.355.395
ເງິນໃຫ້ກູ້ຢືມແກ່ລູກຄ້າ	10	31.742.316	30.762.417
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	11	92.040	90.122
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	12	5.183.549	3.899.011
ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	637.477	614.434
ຊັບສິນບັດຄົງທີ່ ແລະ ອຸປະກອນ	14	551.334	601.572
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	15	57.351	245.873
ສິດໃນການນຳໃຊ້ຊັບສິນ		296.336	57.005
ອາກອນຊັບສິນເຍື່ອນຊຳລະ		38.120	37.015
ຊັບສິນອື່ນໆ		512.598	470.734
ລວມຊັບສິນ		**63.095.260**	**53.970.407**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ	16	4.425.571	3.482.800
ໜີ້ຕ້ອງສົ່ງໃຫ້ລູກຄ້າ	17	53.282.694	45.043.495
ເງິນກູ້ຢືມຈາກທະນາຄານອື່ນ	18	2.975.350	2.962.101
ໜີ້ຕ້ອງສົ່ງອາກອນໃນປີ	19	7.008	23.726
ໜີ້ຕ້ອງສົ່ງສັນຍາເຊົ່າ		26.420	23.059
ໜີ້ສິນອື່ນໆ		235.497	222.197
ລວມໜີ້ສິນ		**60.952.540**	**51.757.378**
ທຶນ			
ທຶນຈົດທະບຽນ	20	1.038.617	1.038.617
ຄັງສະສົມຕາມລະບຽບການ	21	831.665	753.399
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້		(12.616)	(12.616)
ກຳໄລສະສົມ		285.054	433.629
ລວມທຶນ		**2.142.720**	**2.213.029**
ລວມໜີ້ສິນ ແລະ ທຶນ		**63.095.260**	**53.970.407**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ເພັດສະໝອນ ສົມຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນາລິນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 09 ພະຈິກ 2021

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ອນປ່ຽນແປງທຶນ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ທຶນຈົດທະບຽນ ລ້ານກີບ	ຄັ່ງສະສົມຕາມລະບຽບການ ລ້ານກີບ	ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອໃນວັນທີ 30 ມິຖຸນາ 2021	**1.038.617**	**831.665**	**(15.246)**	**276.338**	**2.131.374**
ກຳໄລສຸດທິພາຍໃນໄລຍະ	-	-	-	8.716	8.716
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	-	-	2.630	-	2.630
ຍອດເຫຼືອໃນວັນທີ 30 ກັນຍາ 2021	**1.038.617**	**831.665**	**(12.616)**	**285.054**	**2.142.720**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ເພັດສະໝອນ ສົມຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນາລິນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 09 ພະຈິກ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບົດອະທິບາຍ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**(7.137)**	**154.682**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	14,15	22.317	18.042
ຄ່າຫຼ້ຽຫ້ຽນສິດຂອງການໃຊ້ຊັບສິນ		1.928	1.676
ລາຍຈ່າຍຄ່າເສື່ອມມູນຄ່າ	10	264.301	55.381
ການສູນເສຍມູນຄ່າໃນການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		(6.520)	(1.150)
ສ່ວນແບ່ງກຳໄລແລະຂາດທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	(10.173)	(10.697)
ລາຍຈ່າຍຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້		3.128	(3.087)
ຂາດທຶນຈາກການຂາຍ/ສະສາງຊັບສິນຄົງທີ່		12	-
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ		288.846	-
ລາຍຮັບດອກເບ້ຍ		(616.154)	(572.193)
ລາຍຈ່າຍດອກເບ້ຍ		372.524	329.188
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**313.072**	**(28.158)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		269.161	319.259
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(1.962.676)	(1.829.619)
ສ່ວນປ່ຽນແປງການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		16.296	3.878
ສ່ວນປ່ຽນແປງໃນຊັບສິນອື່ນໆ		(16.556)	13.846
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆສຸດທິ		194.404	72.096
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງໃຫ້ລູກຄ້າສຸດທິ		3.466.745	3.070.967
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		(223.611)	(136.702)
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		(7.344)	(337.756)
ດອກເບ້ຍທີ່ໄດ້ຮັບ		215.543	110.771
ດອກເບ້ຍທີ່ໄດ້ຈ່າຍ		(401.391)	(283.643)
ອາກອນທີ່ໄດ້ຊຳລະພາຍໃນໄລຍະ	19	(27.529)	(16.011)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**1.836.114**	**958.926**
ກິດຈະກຳການລົງທຶນ			
ຊື້ ແລະ ກໍ່ສ້າງຊັບສົມບັດຄົງທີ່		40.558	(11.980)
ຊື້ຊັບສິນຄົງທີ່ບໍ່ມີຕົວຕົນ		(50.481)	2.813
ຮັບເງິນຈາກການຂາຍຊັບສົມບັດຄົງທີ່		915	-
ຊື້ສິດການນຳໃຊ້		1.061	-
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	-	71

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບິດອະທິບາຍ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ກິດຈະກຳການລົງທຶນ (ຕໍ່)			
ຮັບເງິນຈາກເງິນລົງທຶນໃນການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	12	760.411	-
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**752.462**	**(9.095)**
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		(282)	-
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ		**(282)**	**-**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**2.588.294**	**949.834**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ		-	-
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ	23	**2.588.294**	**949.834**
ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ			
ການໄດ້ມາຂອງລາຍການການກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດຄົງທີ່		(359)	
ເພີ່ມຂຶ້ນສຳລັບລາຍການສົດໃນການນຳໃຊ້ຊັບສິນ		2.973	
ການຊຳລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນໃນຫຼັກຊັບ ປະເພດຖືໄວ້ຈົນຄົບກຳນົດ		1.679.062	

ກະກຽມໂດຍ:

ທ່ານ ນ. ພູເສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ເພັດສະໝອນ ສົມຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ບາລີນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ.
ວັນທີ: 09 ພະຈິກ 2021

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນທະນາຄານມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີລາຍລະອຽດກ່ຽວກັບ ທະນາຄານດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນ ທີ 30 ກັນຍາ 2021, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫຼັກ, ເກົ້າສິບແປດ (98) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານ ເພື່ອສະໜອງການບໍລິການດ້ານທະນາຄານປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	**ຈຳນວນຮຸ້ນ**	***%***
ລັດຖະບານ	124.634.021	60
ຄຸ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	62.316.920	30
	207.723.300	**100**

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນ ຢ່າງອື່ນ.

ເອກະສານລາຍງານການເງິນ ສະບັບນີ້ໄດ້ຮັບການຮັບຮອງຈາກ ຄະນະຜູ້ບໍລິຫານ ທຄຕລ ໃນວັນທີ: 09 ພະຈິກ 2021

2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

ອີງຕາມຄຳສັ່ງ ນາຍົກລັດຖະມົນຕີ ເລກທີ 15/ນຍ ລົງວັນທີ 21 ເມສາ 2021 ໄດ້ມີການລັອກເມືອງຂອງນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ. ຄຳສັ່ງສະບັບໃໝ່ນີ້ໄດ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 22 ເມສາ 2021 ເຖິງວັນທີ 5 ພຶດສະພາ 2021 ແລະ ໄດ້ມີການ ຂະຫຍາຍໄລຍະເວລາຂອງການລັອກເມືອງໄປຈົນເຖິງວັນທີ 14 ພະຈິກ 2021.

ທະນາຄານແຫ່ງ ສປປ ລາວໄດ້ປະກາດນະໂຍບາຍເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຊັ່ນວ່າໄດ້ ຍົກເວັ້ນການປະຕິບັດຕາມກົດລະບຽບສະບັບເລກທີ: 512/ທຫລ ສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນ ກຸ່ມຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດ ປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19.

ແນວທາງຂອງການຮັບມື, ທະນາຄານໄດ້ ສືບຕໍ່ປະຕິບັດນຳໃຊ້ຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການປັບໂຄງ ສ້າງເງິນກູ້ ແລະ ການຕິດຕາມຢ່າງໃກ້ຊິດກັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ COVID-19 ເຊິ່ງອາດຈະມີຜົນກະທົບຕໍ່ກັບຄັງເງິນກູ້ ຂອງທະນະຄານ.

3. ພື້ນຖານການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ໃບລາຍງານ ຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງ ທຶນ) ແມ່ນໄດ້ນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳໂດຍປະຕິບັດຕາມ ກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO).

ເອກະສານລາຍງານການເງິນ ຄວນຈະອ່ານຄວບຄູ່ກັບເອກະສານລາຍງານການເງິນປະຈຳ 06 ເດືອນຕົ້ນປີ 2021 ແລະ ປະຈຳປີ 2020.

ໃນການກະກຽມເອກະສານລາຍງານການເງິນນັ້ນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ດຸນພິນິດໃນການຄາດຄະເນ ແລະ ຕັ້ງຂໍ້ສົມມຸດ ຖານທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນໃນວັນທີຂອງ ເອກະສານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍໃນໄລຍະຂອງການລາຍງານ. ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນກ່ຳຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງ ຈາກການປະມາດຄະເນເຫຼົ່ານີ້.

4. ນະໂຍບາຍການບັນຊີ

ນະໂຍບາຍບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນແມ່ນສອດຄ່ອງກັບຂໍ້ມູນທີ່ນຳໃຊ້ເຂົ້າໃນເອກະສານລາຍງານ ການເງິນປະຈຳປີ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020.

5. ລາຍຮັບສຸດທິຈາກດອກເບ້ຍ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ລາຍຮັບດອກເບ້ຍ:		
ການໃຫ້ກູ້ຢືມ	530.476	495.158
ເງິນຝາກຢູ່ທະນາຄານອື່ນ	13.634	13.823
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	71.846	55.390
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ	198	7.822
	616.154	**572.193**
ລາຍຈ່າຍດອກເບ້ຍ:		
ເງິນຝາກຂອງທະນາຄານອື່ນ	(48.549)	(47.016)
ເງິນຝາກຂອງລູກຄ້າ	(324.065)	(282.172)
	(372.524)	**(329.189)**
ລາຍຮັບສຸດທິຈາກດອກເບ້ຍ	**243.630**	**243.005**

6. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	62.960	44.425
ທຸລະກຳທາງດ້ານສິນເຊື່ອ	444	14.340
ທຸລະກຳທາງອື່ນໆ	13.937	8.801
	77.341	**67.566**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(8.436)	(5.992)
ທຸລະກຳທາງອື່ນໆ	(861)	191
	(9.297)	**(5.801)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**68.044**	**61.765**

7. ລາຍຈ່າຍອື່ນໆຈາກການດຳເນີນງານ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	12.419	5.608
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	5.733	6.041
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	5.068	4.111
ຂາດທຶນຈາກສະສາງຊັບສິນຄົງທີ່	12	3
ຄ່າປະກັນໄພ	2.130	2.227
ຄ່າໂທລະຄົມມະນາຄົມ	2.467	2.457
ສາທາລະນຸປະໂພກ	2.972	2.449
ອື່ນໆ	13.082	11.720
	43.883	**34.616**

8. ກຳໄລຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນໃນວັນທີ 30 ກັນຍາ 2021 ແລະ 2020 ແມ່ນອີງໃສ່ ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານໃນໄລຍະ ແລະ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະດັ່ງຕໍ່ໄປນີ້:

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020
ກຳໄລ ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ)	8.716	136.169
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບກຳໄລພື້ນຖານຕໍ່ຮຸ້ນ (ຮຸ້ນ)	207.723.300	207.723.300
ກຳໄລຕໍ່ຮຸ້ນ (ກີບ)	42	656

9. ເງິນຝາກຢູ່ທະນາຄານອື່ນ

	ກ່ອນການກວດສອບ 30 *ກັນຍາ* 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**6.658.167**	**3.595.399**
- ເປັນເງິນກີບ	79	26.045
- ເປັນເງິນຕາຕ່າງປະເທດ	6.658.088	3.569.354
ເງິນຝາກມີກຳນົດ	**890.623**	**759.326**
- ເປັນເງິນກີບ	387.890	82.890
- ເປັນເງິນຕາຕ່າງປະເທດ	502.733	676.436
ດອກເບ້ຍຄ້າງຮັບ	**4.377**	**670**
	7.553.167	**4.355.395**

9. ເງິນຝາກຢູ່ທະນາຄານອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຢູ່ທະນາຄານອື່ນພາຍໃນໄລຍະມີດັ່ງນີ້ :

	30 *ກັນຍາ* 2021 **% ຕໍ່ປີ**	**31 *ທັນວາ* 2020** **% ຕໍ່ປີ**
ເງິນຝາກກະແສລາຍວັນ	0,00 - 3,10	0,00 - 3,10
ເງິນຝາກປະຢັດ	0,00 - 0,80	0,00 - 0,80
ເງິນຝາກມີກຳນົດ	0,30 - 5,70	0,14 - 3,50

10. ເງິນກູ້ໃຫ້ແກ່ລູກຄ້າ

	ກ່ອນການກວດສອບ **30 *ກັນຍາ* 2021** **ລ້ານກີບ**	**ກວດສອບ** **31 *ທັນວາ* 2020** **ລ້ານກີບ**
ເງິນກູ້ໃຫ້ແກ່ລູກຄ້າທັງໝົດ	29.616.044	29.152.520
ຫັກ: ເງິນສະຂາດທຶນຈາກການເສື່ອມຄ່າ	(1.611.772)	(1.073.649)
ດອກເບ້ຍຄ້າງຮັບ	3.738.044	2.683.546
	31.742.316	**30.762.417**

ສ່ວນປ່ຽນແປງໃນເງິນສະສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ພາຍໃນເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**1.073.649**
ປ່ຽນແປງສຸດທິພາຍໃນໄລຍະ	495.200
ສະສາງໜີ້ຕ້ອງຮັບທວງຍາກ	163.437
ຜົນຕ່າງຈາກອັດຕາແລກປ່ຽນ	(120.514)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດ ສອບ	**1.611.772**

ລາຍລະອຽດເງິນສະສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	30 ກັນຍາ 2021		**31 ທັນວາ 2020**	
	ຍອດເຫຼືອທ້າຍ **ລ້ານກີບ**	**ຄ່າເສື່ອມ** **ລ້ານກີບ**	**ຍອດເຫຼືອທ້າຍ** **ລ້ານກີບ**	**ຄ່າເສື່ອມ** **ລ້ານກີບ**
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	4.859.896	1.204.505	3.791.761	891.521
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	24.756.148	407.267	25.360.759	182.128
	29.616.044	**1.611.772**	**29.152.520**	**1.073.649**

10. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະ ມີດັ່ງລຸ່ມນີ້:

	30 *ກັນຍາ* 2021 % ຕໍ່ປີ	31 *ທັນວາ* 2020 % ຕໍ່ປີ
ເງິນກູ້ເປັນເງິນ ກີບ	5,50 - 16,00	5,50 - 16,00
ເງິນກູ້ເປັນເງິນ ໂດລາ	4,25 - 16,00	4,25 - 16,00
ເງິນກູ້ເປັນເງິນ ບາດ	6,00 - 10,00	6,00 - 10,00

ເງິນກູ້ແບ່ງຕາມສະກຸນເງິນ:

	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ເງິນກູ້ເປັນເງິນ ກີບ	11.914.794	12.717.791
ເງິນກູ້ເປັນເງິນ ໂດລາ	13.997.027	12.841.292
ເງິນກູ້ເປັນເງິນ ບາດ	3.704.223	3.593.437
	29.616.044	**29.152.520**

ເງິນກູ້ແບ່ງຕາມມື້ຄົບກຳນົດເດີມ:

	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ເງິນກູ້ໄລຍະສັ້ນ	2.859.371	2.541.425
ເງິນກູ້ໄລຍະກາງ	16.463.738	16.009.856
ເງິນກູ້ໄລຍະຍາວ	10.292.935	10.601.239
	29.616.044	**29.152.520**

11. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ທະນາຄານ ມີການລົງທຶນໃນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ໃນວັນທີ 30 ກັນຍາ 2021, ຮຸ້ນມີມູນຄ່າຍຸຕິທຳ ແມ່ນ 92.040 ລ້ານກີບ.

12. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

ການປ່ຽນແປງທີ່ມີສາລະສຳຄັນ ຂອງການລົງທຶນປະເພດຖືໄວ້ຈົນຄົບກຳນົດ ມີລາຍລະອຽດດັ່ງລຸ່ມນີ້

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**3.899.011**
ເພີ່ມຂຶ້ນ	2.185.684
ວິທີຫຼຸດຕົ້ນທຶນທີ່ເກີດຂຶ້ນໃນໄລຍະ	(72.946)
ໄດ້ຮັບ	(828.200)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດ ສອບ	**5.183.549**

13. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມມີລາຍລະອຽດດັ່ງລຸ່ມນີ້

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**614.434**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	23.048
ລົງທຶນເພີ່ມໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ *	1.360
ຫັກ: ເງິນປັນຜົນໄດ້ຮັບໃນໄລຍະ	(1.365)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດສອບ	**637.477**

* ທະນາຄານມີການຈ່າຍເງິນລົງທຶນເພີ່ມໃນບໍລິສັດ ລາວເນີເຊິນນໍ ເພເມັ້ນ ເນັດເວີກ ຈຳກັດມູນຄ່າເທົ່າກັບ 1.360 ລ້ານກີບ

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໃນວັນທີ 30 ກັນຍາ 2021, ມີດັ່ງນີ້:

	ອັດຕາສ່ວນການ ລົງທຶນ		**ມູນຄ່າຕົ້ນທຶນ**		**ເງິນລົງທຶນວິທີສ່ວນໄດ້ເສຍ**	
	30 ກັນຍາ 2021	**31 ທັນວາ 2020**	**ກ່ອນການ ກວດສອບ 30 ກັນຍາ 2021**	**ກວດສອບ 31 ທັນວາ 2020**	**ກ່ອນການ ກວດສອບ 30 ກັນຍາ 2021**	**ກວດສອບ 31 ທັນວາ 2020**
	(%)		**ລ້ານກີບ**			
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70	70	70.000	70.000	74.649	73.586
ທະນາຄານຮ່ວມທຸລະກິດລາວ - ຫວຽດ	25	25	197.839	197.839	252.964	246.894
ທະນາຄານ ລາວ-ຝຣັ່ງ ຈຳກັດ	30	30	114.000	114.000	118.239	111.925
ທະນາຄານ ລາວ-ຈີນ ຈຳກັດ	49	49	147.000	147.000	173.404	166.964
ບໍລິສັດ ປະກັນໄພລາວ-ຫວຽດ	35	35	9.168	9.168	13.914	12.093
ບໍລິສັດ ລາວເນີເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	20	20	4.760	3.400	4.307	2.972
ລວມ			**542.767**	**541.407**	**637.477**	**614.434**

14. ຊັບສົມບັດຄົງທີ່ ແລະ ອຸປະກອນ

ການເຄື່ອນໄຫວ ຂອງຊັບສົມບັດຄົງທີ່ ແລະ ອຸປະກອນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**601.572**
ເພີ່ມຂຶ້ນ*	129.065
ໂອນໄປ ຊັບສົມບັດອື່ນໆ	(114.007)
ສະສາງ /ຂາຍ, ສຸດທິ	(5.928)
ຄ່າຫຼ້ຍຫ້ຽນ	(59.369)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021- ກ່ອນການກວດສອບ	**551.334**

***** ໃນໄລຍະນີ້, ການເພີ່ມຂຶ້ນສ່ວນຫຼາຍຂອງຊັບສົມບັດຄົງທີ່ ແລະ ອຸປະກອນ ແມ່ນຄື ເຊີເວີ, ອຸປະກອນສຳລັບໄອທີ ແລະ ເຄື່ອງຈັກນັບເງິນ ເປັນຕົ້ນ.

15. ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**245.873**
ເພີ່ມຂຶ້ນ	53.952
ຄ່າຫຼ້ຍຫ້ຽນ	(3.489)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດສອບ	**296.336**

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ

	ກ່ອນການກວດສອບ 30 *ກັນຍາ* 2021 ລ້ານກີບ	ກວດສອບ 31 *ທັນວາ* 2020 ລ້ານກີບ
ເງິນຝາກກະແສລາຍວັນ	**3.504.491**	**2.626.472**
- ເປັນເງິນກີບ	1.485.783	961.938
- ເປັນເງິນຕາຕ່າງປະເທດ	2.018.708	1.664.534
ເງິນຝາກປະຢັດ	**161.672**	**113.582**
- ເປັນເງິນກີບ	98.494	70.786
- ເປັນເງິນຕາຕ່າງປະເທດ	63.178	42.796
ເງິນຝາກມີກຳນົດ	**731.517**	**707.545**
- ເປັນເງິນກີບ	261.870	323.910
- ເປັນເງິນຕາຕ່າງປະເທດ	469.647	383.635
ອື່ນໆ	**13.829**	**17.141**
- ເປັນເງິນກີບ	12.988	17.133
- ເປັນເງິນຕາຕ່າງປະເທດ	841	8
ດອກເບ້ຍຄ້າງຈ່າຍ	**14.061**	**18.060**
	4.425.572	**3.482.800**

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໃນໄລຍະມີດັ່ງລຸ່ມນີ້:

	30 ກັນຍາ 2021 % ຕໍ່ປີ	31 ທັນວາ 2020 % ຕໍ່ປີ
ເງິນຝາກກະແສລາຍວັນ	0,00 - 0,30	0,00 - 0,30
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0,56 - 6,65	0,56 - 6,65

17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ເງິນຝາກກະແສລາຍວັນ	**7.225.460**	**6.630.559**
ເງິນຝາກກະແສລາຍວັນເປັນເງິນກີບ	3.336.775	3.102.811
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	3.888.685	3.527.748
ເງິນຝາກປະຢັດ	**26.257.609**	**21.324.874**
ເງິນຝາກປະຢັດເປັນເງິນກີບ	13.058.323	10.326.176
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	13.199.286	10.998.698
ເງິນຝາກມີກຳນົດ	**19.106.342**	**16.508.548**
ເງິນຝາກມີກຳນົດເປັນເງິນກີບ	9.304.707	8.522.980
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	9.801.635	7.985.568
ເງິນຝາກມັດຈຳ	**99.552**	**64.704**
ເງິນຝາກມັດຈຳເປັນເງິນກີບ	23.305	25.731
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	76.247	38.973
ໜີ້ຕ້ອງສົ່ງລູກຄ້າອື່ນໆ	**157.638**	**122.433**
ດອກເບ້ຍຄ້າງຈ່າຍ	**436.093**	**392.377**
	53.282.694	**45.043.495**

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 0,00% – 1,60%, 0,90% - 1,15% ແລະ 0,45% – 0,55% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ, ບາດ ມີກຳນົດຕັ້ງແຕ່ 3, 6, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3,16% – 12,15%, 1,65% - 7,75% ແລະ 1,1% – 7,75% ຕໍ່ປີ ຕາມລຳດັບ.

18. ເງິນກູ້ຢືມຈາກທະນາຄານອື່ນ

ການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**2.850.433**
ເພີ່ມຂຶ້ນ	16.273
ຈ່າຍຄືນ	(252.362)
ຂາດທຶນຈາກອັດຕາແລກປ່ຽນ	215.693
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດສອບ	**2.830.037**

	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	2.014.835	1.885.302
ເງິນກູ້ຢືມຈາກທະນາຄານອື່ນ	815.202	965.131
ລວມ	**2.830.037**	**2.850.433**
ດອກເບ້ຍຄ້າງຈ່າຍ	145.313	111.668
	2.975.350	**2.962.101**

19. ໜີ້ຕ້ອງສົ່ງອື່ນໃນງວດ

	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ	ກວດສອບ 31 ທັນວາ 2020 ລ້ານກີບ
ອື່ນໆກໍາໄລຄ້າງຊໍາລະ (1)	7.008	23.726

(1) ການເຄື່ອນໄຫວຂອງອື່ນໆກໍາໄລຄ້າງຊໍາລະ ໃນໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**23.726**
ລາຍຈ່າຍອື່ນໆກໍາໄລໃນໄລຍະ (2)	15.853
ຈ່າຍຊໍາລະໃນໄລຍະ	(32.571)
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດສອບ	**7.008**

(2) ລາຍຈ່າຍອື່ນໆກໍາໄລ ສໍາລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ ສິ້ນສຸດວັນທີ 30 ກັນຍາ 2021 ແລະ 30 ກັນຍາ 2020 ມີດັ່ງນີ້:

	ກ່ອນການກວດສອບ ສໍາລັບໄລຍະສາມເດືອນຂອງໄຕ ມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ	ກ່ອນການກວດສອບ ສໍາລັບໄລຍະສາມເດືອນຂອງ ໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2020 ລ້ານກີບ
ອື່ນໆກໍາໄລໄລຍະປັດຈຸບັນ	14.748	(28.382)
ອື່ນໆກໍາໄລລໍຖ້າຊໍາລະສະສາງ	1.105	9.869
	15.853	**(18.813)**

20. ທຶນຈົດທະບຽນ

ທຶນຈົດທະບຽນບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້ສາມເດືອນຕົ້ນປີນີ້.

21. ຄັງສະສົມຕາມລະບຽບການ

	ຄັງສະສົມຕາມລະບຽບການ ລ້ານກີບ	ຄັງຂະຫຍາຍທຸລະກິດ ແລະ ຄັງສະສົມອື່ນໆ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ	**205.773**	**547.626**	**753.399**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2020	22.362	55.904	78.266
ຍອດເຫຼືອ ໃນວັນທີ 30 ກັນຍາ 2021 - ກ່ອນການກວດສອບ	**228.135**	**603.530**	**831.665**

22. ເງິນປັນຜົນ

ກອງປະຊຸມວິສາມັນຜູ້ຖືຮຸ້ນຈັດຂຶ້ນໃນວັນທີ 30 ເມສາ 2021, ມີມະຕິອະນຸມັດການຈ່າຍເງິນປັນຜົນສຳລັບປີ 2020 ລວມເປັນເງິນທັງໝົດ 116 ຕື້ກີບ (ລາຄາ 560 ກີບຕໍ່ຮຸ້ນ). ເງິນປັນຜົນດັ່ງກ່າວໄດ້ຖືກຈ່າຍໃນວັນທີ 18 ພຶດສະພາ 2021.

23. ລາຍລະອຽດເພີ່ມຕື່ມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດມ ປະກອບມີມູນຄ່າຂອງເອກະສານລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

	ກ່ອນການກວດສອບ 30 *ກັນຍາ* 2021 ລ້ານກີບ	ກ່ອນການກວດສອບ 30 *ກັນຍາ* 2020 ລ້ານກີບ
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	2.590.860	2.062.385
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	12.314.823	8.304.667
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ	6.658.167	3.224.305
ເງິນຝາກມີກຳຫນົດ ທີ່ມີກຳຫນົດ 90 ວັນ	785.623	102.151
	22.349.472	**13.693.508**

24. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	30 ກັນຍາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii)	1.953.242	3.301.678
ໜັງສືຄ້ຳປະກັນທາງການເງິນ (i)	337.534	481.964
ໜັງສືສິນເຊື່ອກັບທີ່	153.472	175.324
ໜັງສືສິນເຊື່ອລໍຖ້າຊຳລະສະສາງ	41.450	68.737
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ (ii)	548	548
	2.486.246	**4.028.250**

(i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ, ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້, ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃນບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ.

(ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝູນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງສະແດງເຖິງຄວາມຕ້ອງການເງິນສົດໃນອະນາຄົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນ ແມ່ນຕ່ຳກວ່າມູນຄ່າທັງໝົດ ຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້ ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອ ຂຶ້ນຢູ່ກັບລູກຄ້າສາມາດຮັກສາມາດຕະຖານສະເພາະ ທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາໄລຍະຍາວກວ່າ ແມ່ນມີຄວາມສ່ຽງຫຼາຍກວ່າຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

25. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຂັ້ນຕ່ຳຕາມລະບຽບການ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງການເງິນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງ ທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມ ພຽງພໍຂອງທຶນ

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານການຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;

- ທຶນຊັ້ນ 2 ແມ່ນມູນຄ່າທີ່ຕ່ຳກວ່າ 1,25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ ຫຼືຍອດ ເຫຼືອຂອງເງິນແຮທົ່ວໄປ ແລະເງິນແຮສຳລັບຄວາມສ່ຽງ ແລະ ລາຍຈ່າຍເງິນແຮພາຍໃນໄລຍະສາມເດືອນ.

ຂອບເຂດຕ່າງໆ ແມ່ນຖືກນຳໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່ ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງ ບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນ ດັ່ງຕໍ່ໄປນີ້:

	30 ກັນຍາ 2021 **ລ້ານກີບ**	**31 ທັນວາ 2020** **ລ້ານກີບ**
ທຶນຊັ້ນ 1	2.142.720	2.213.029
ທຶນຊັ້ນ 2	-	-
ລວມທຶນ	**2.142.720**	**2.213.029**
ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(637.477)	(614.434)
ທຶນສຳລັບການຄິດໄລ່ CAR (A)	**1.505.243**	**1.598.595**
ຄວາມສ່ຽງສຳຄັນຢູ່ໃບລາຍງານຖານະການເງິນ	18.267.666	16.662.140
ຄວາມສ່ຽງສຳຄັນຢູ່ລາຍການນອກໃບລາຍງານຖານະການເງິນ	1.191.881	1.955.930
ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)	**19.459.547**	**18.618.070**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**7,74%**	**8,59%**

26. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ) ຜູ້ຖືຮຸ້ນໃຫຍ່ຂອງທະນາຄານ ແມ່ນ ລັດຖະບານລາວ ຖືຮຸ້ນ 60% ຂອງຮຸ້ນທັງໝົດຂອງທະນາຄານ. ຮຸ້ນສ່ວນທີ່ເຫຼືອຂອງທະນາຄານ ແມ່ນຖືໂດຍນັກລົງທຶນທົ່ວໄປ.

ຂໍ້ມູນຂອງທະນາຄານ ໃນສ່ວນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແມ່ນ ໄດ້ເປີດເຜີຍຢູ່ບົດອະທິບາຍຂໍ້ທີ 13.

ຂ) ລາຍການເຄື່ອນໄຫວທີ່ເປັນສາລະສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	30 ກັນຍາ 2021 ລ້ານກີບ	30 ກັນຍາ 2020 ລ້ານກີບ
ລາຍຮັບດອກເບ້ຍ ແລະ ອື່ນໆ		
ບໍລິສັດແມ່	204.728	133.256
ລາຍຈ່າຍດອກເບ້ຍ ແລະ ອື່ນໆ		
ພາກສ່ວນທີ່ກ່ຽວຂ້ອງ	77.718	(73.829)

ລາຍການເຄື່ອນໄຫວ ກັບສະພາບໍລິຫານຂອງທະນາຄານ

ຄ) ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

	30 ກັນຍາ 2021 ລ້ານກີບ	30 ກັນຍາ 2020 ລ້ານກີບ
ເງິນເດືອນ	1.038	966
ເງິນບຳເນັດ	295	523
ເງິນອຸດໜູນຕ່າງໆ	733	680
	2.066	**2.169**

ງ) ຍອດຄົງເຫຼືອທີ່ເກີດຈາກ ລາຍຮັບດອກເບ້ຍ. ລາຍຈ່າຍດອກເບ້ຍ ແລະ ອື່ນໆ

ຍອດຄົງເຫຼືອ ໃນໄລຍະລາຍງານ ຂອງລາຍການຂອງພາກສ່ວນທີ່ກ່ຽວຂ້ອງ ມີດັ່ງຕໍ່ໄປນີ້:

	30 ກັນຍາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ໜີ້ຕ້ອງຮັບ		
ບໍລິສັດແມ່	5.256.098	3.971.052
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	863.284	793.662
ພາກສ່ວນທີ່ກ່ຽວຂ້ອງ	13.828.295	10.455.970
ໜີ້ຕ້ອງສົ່ງ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	1.097.225	991.987
ພາກສ່ວນທີ່ກ່ຽວຂ້ອງ	2.152.003	1.885.307